ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-------------------------

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1736 /ອຄ.ຄພນ

ນະຄອນຫຼວງວຽງຈັນ, ວັນທີ 12 SEP 2013

## ຂໍ້ຕົກລົງ

## ວ່າດ້ວຍການນຳໃຊ້ເງິນທີ່ໄດ້ມາຈາກການຫັກຄ່າສິ້ນເປືອງ

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 522/ນຍ, ລົງວັນທີ 23 ທັນວາ 2011 ;
- ອີງຕາມ ມາດຕາ 27 ໝວດທີ 5 ຂອງດຳລັດວ່າດ້ວຍການກວດກາການຄ້າ ເລກທີ 508/ລບ, ລົງວັນທີ 4 ທັນວາ 2012.

ລັດຖະມົນຕີວ່າການກະຊວງ ອຸດສາຫະກຳ ແລະ ການຄ້າອອກຂໍ້ຕົກລົງ :

## ໝວດທີ I
## ຫຼັກການທົ່ວໄປ

### ມາດຕາ 1. ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ວິທີການ ນຳໃຊ້ເງິນ ທີ່ໄດ້ມາຈາກ ການຫັກຄ່າສິ້ນເປືອງຕ່າງໆ ໃນການເຄື່ອນໄຫວປະຕິບັດວຽກງານກວດກາການຄ້າ ເຊັ່ນ: ການດຳເນີນການແກ້ ໄຂຄະດີ, ຄ່າແຫຼ່ງຂ່າວ, ຄ່າຝາກສາງ, ຄ່າແບກຫາບຍົກຍໍ ແລະເຄື່ອນຍ້າຍຂອງກາງທີ່ຍຶດ ຫຼືຮິບ, ໃຫ້ ບຸກຄົນທົ່ວໄປທີ່ປະກອບສ່ວນເຂົ້າໃນການດຳເນີນການກວດກາການຄ້າ ແລະຄ່າໃຊ້ຈ່າຍ ໃນການບູລະ ນະກິງຈັກວຽກງານກວດກາການຄ້າ ເພື່ອແນໃສ່ເຮັດໃຫ້ວຽກງານກວດກາການຄ້າ ໄດ້ຮັບປະສິດທິຜົນ ແລະສັງຄົມມີສ່ວນຮ່ວມໃນການຕ້ານ ແລະ ສະກັດກັ້ນການລະເມີດລະບຽບ ກົດໝາຍ ກ່ຽວກັບການຄຸ້ມຄອງການຄ້າ ແລະການຄ້າສິນຄ້ານອກລະບົບ.

### ມາດຕາ 2. ຫຼັກການໃນການນຳໃຊ້ເງິນທີ່ໄດ້ມາຈາກການຫັກຄ່າສິ້ນເປືອງ

ການນຳໃຊ້ເງິນທີ່ໄດ້ມາຈາກການຫັກຄ່າສິ້ນເປືອງຕ້ອງປະຕິບັດຕາມຫຼັກການດັ່ງນີ້ :

- ບົນພື້ນຖານລະບຽບຫຼັກການ ທີ່ວາງໄວ້;
- ຮັບປະກັນຄວາມໂປ່ງໃສ;
- ສາມາດກວດສອບໄດ້.

## ມາດຕາ 3. ຂອບເຂດນຳໃຊ້

ຂໍ້ຕົກລົງສະບັບນີ້ນຳໃຊ້ ສຳລັບພະນັກງານ, ເຈົ້າໜ້າທີ່ກວດກາການຄ້າ, ເຈົ້າໜ້າທີ່ອື່ນ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ເຂົ້າຮ່ວມໃນການປະຕິບັດວຽກງານກວດກາການຄ້າ.

## ໝວດທີ II
## ການຫັກຄ່າສິ້ນເປືອງ ຈາກເງິນທີ່ປັບໃໝ ຫຼືຂາຍເຄື່ອງທີ່ໄດ້ຮິບ

## ມາດຕາ 4. ເງິນທີ່ປັບໃໝ ຫຼືຂາຍເຄື່ອງທີ່ໄດ້ຮິບ

ອີງຕາມມາດຕາ 27 ຂອງດຳລັດວ່າດ້ວຍການກວດກາການຄ້າ ສະບັບເລກທີ 508/ລບ, ລົງວັນທີ 4 ທັນວາ 2012, ເງິນທີ່ໄດ້ຈາກການປັບໃໝ ຫຼືຂາຍເຄື່ອງທີ່ໄດ້ຮິບ ແມ່ນໃຫ້ໃຊ້ຈ່າຍ ການດຳເນີນການແກ້ໄຂຄະດີ, ຄ່າແຫຼ່ງຂ່າວ, ຄ່າຝາກສາງ, ຄ່າແບກຫາບຍົກຍໍ ແລະເຄື່ອນຍ້າຍຂອງກາງທີ່ຍຶດ ຫຼືຮິບ, ໃຫ້ບຸກຄົນທົ່ວໄປ ທີ່ປະກອບສ່ວນ ເຂົ້າໃນການດຳເນີນການກວດກາການຄ້າ ແລະຄ່າໃຊ້ຈ່າຍ ຕ່າງໆທີ່ຈຳເປັນ, ເຫຼືອນັ້ນແມ່ນມອບເຂົ້າງົບປະມານ.

ຄ່າໃຊ້ຈ່າຍດັ່ງກ່າວນັ້ນ ແມ່ນບໍ່ໃຫ້ເກີນຊາວສ່ວນຮ້ອຍ 20% ຂອງມູນຄ່າເງິນທີ່ໄດ້ຈາກການປັບໃໝ ຫຼື ຂາຍເຄື່ອງທີ່ໄດ້ຮິບນັ້ນ.

## ມາດຕາ 5. ວິທີຄິດໄລ່ ການຫັກຄ່າສິ້ນເປືອງ

ວິທີຄິດໄລ່ການຫັກຄ່າສິ້ນເປືອງໃຫ້ປະຕິບັດດັ່ງນີ້ :

- ການຄິດໄລ່ຫັກຄ່າສິ້ນເປືອງ ແມ່ນໃຫ້ເອົາມູນຄ່າການປັບໃໝ ຫຼື ຂາຍເຄື່ອງທີ່ໄດ້ຮິບຕົວຈິງມາເປັນພື້ນຖານຄິດໄລ່, ແຕ່ບໍ່ໃຫ້ເກີນ ຊາວສ່ວນຮ້ອຍ(20%) ຂອງມູນຄ່າການປັບໃໝ ຫຼືຂາຍເຄື່ອງຮິບທັງໝົດ.

## ມາດຕາ 6. ການກຳນົດຄ່າສິ້ນເປືອງຕ່າງໆ

ການກຳນົດຄ່າສິ້ນເປືອງຕ່າງໆ (20%) ມີດັ່ງນີ້:

1. ຄ່າໃຊ້ຈ່າຍສຳລັບແຫຼ່ງຂ່າວ ບໍ່ໃຫ້ເກີນ 4% ;

2. ຄ່າໃຊ້ຈ່າຍໃນການດຳເນີນການແກ້ໄຂຄະດີ, ຝາກສາງ, ແບກຫາບຍົກຍໍ, ເຄື່ອນຍ້າຍຂອງກາງທີ່ຍຶດ ຫຼື ຮິບ ແລະ ໃຫ້ບຸກຄົນທົ່ວໄປ ທີ່ປະກອບສ່ວນເຂົ້າໃນການດຳເນີນການກວດກາການຄ້າ ບໍ່ໃຫ້ເກີນ 12%;

3. ຄ່າໃຊ້ຈ່າຍ ໃນການບູລະນະກິງຈັກການຈັດຕັ້ງວຽກງານກວດກາການຄ້າ 4%.

## ມາດຕາ 7. ການຈ່າຍຄ່າແຫຼ່ງຂ່າວ(4%)

ການຈ່າຍຄ່າແຫຼ່ງຂ່າວ ແມ່ນຈ່າຍໃຫ້ບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງ ທີ່ໃຫ້ແຫຼ່ງຂ່າວຊັດເຈນ ກ່ຽວກັບການລະເມີດລະບຽບການຄຸ້ມຄອງການຄ້າ, ການຄ້າສິນຄ້ານອກລະບົບ.

ການຈ່າຍຄ່າແຫຼ່ງຂ່າວ ແມ່ນບໍ່ໃຫ້ເກີນ 4% ຂອງເງິນທີ່ໄດ້ຫັກຄ່າສິ້ນເປືອງ 20% ຈາກມູນຄ່າການປັບໃໝ ຫຼືຂາຍເຄື່ອງທີ່ໄດ້ຮິບ.

## ມາດຕາ 8. ຄ່າໃຊ້ຈ່າຍ ໃນການດຳເນີນການແກ້ໄຂຄະດີ, ຝາກສາງ, ແບກຫາບຍົກຍໍ, ເຄື່ອນຍ້າຍຂອງກາງທີ່ຍຶດ ຫຼື ຮິບ ແລະ ໃຫ້ບຸກຄົນທົ່ວໄປ ທີ່ປະກອບສ່ວນເຂົ້າໃນການດຳເນີນການກວດກາການຄ້າ ບໍ່ໃຫ້ເກີນ 12%;

ຄ່າໃຊ້ຈ່າຍ ໃນການດຳເນີນການແກ້ໄຂຄະດີ, ຝາກສາງ, ແບກຫາບຍົກຍໍ, ເຄື່ອນຍ້າຍຂອງກາງທີ່ຍຶດ ຫຼືຮິບ ແລະ ໃຫ້ບຸກຄົນທົ່ວໄປ ທີ່ປະກອບສ່ວນເຂົ້າໃນການດຳເນີນການກວດກາການຄ້າ ບໍ່ໃຫ້ເກີນ 12% ມີດັ່ງນີ້:

- ຈ່າຍໃຫ້ຜູ້ທີ່ເຂົ້າຮ່ວມໃນການດຳເນີນການແກ້ໄຂຄະດີ ເປັນຕົ້ນ ເຈົ້າໜ້າທີ່ກວດກາການຄ້າ, ພະນັກງານຈາກພາກສ່ວນອື່ນ, ຄະນະຜູ້ຊີ້ນຳໃນການແກ້ໄຂ;
- ຈ່າຍຄ່າຝາກສາງ ແມ່ນຈ່າຍໃຫ້ເຈົ້າຂອງສະຖານທີ່ ທີ່ໄດ້ເອົາສິນຄ້າ, ເຄື່ອງຂອງ, ພາຫະນະທີ່ລະເມີດໄປຝາກໄວ້ ຫຼືຈ່າຍໃຫ້ຜູ້ທີ່ໄດ້ໄປເຝົ້າຍາມ;
- ຈ່າຍຄ່າແບກຫາບຍົກຍໍ, ເຄື່ອນຍ້າຍຂອງກາງ ທີ່ຍຶດ ຫຼືຮິບ ແມ່ນຈ່າຍໃຫ້ບຸກຄົນທີ່ ມາຮັບເໝົາໃນການແບກຫາບຍົກຍໍ, ເຄື່ອນຍ້າຍຂອງກາງ;
- ຈ່າຍໃຫ້ບຸກຄົນທົ່ວໄປ ທີ່ປະກອບສ່ວນເຂົ້າໃນການດຳເນີນການກວດກາການຄ້າ.

## ມາດຕາ 9. ຄ່າໃຊ້ຈ່າຍ ໃນການບູລະນະກິງຈັກການຈັດຕັ້ງວຽກງານກວດກາການຄ້າ 4%.

ສຳລັບຄ່າໃຊ້ຈ່າຍໃນການບູລະນະກິງຈັກການຈັດຕັ້ງວຽກງານກວດກາການຄ້າ 4% ໃຫ້ຕັ້ງເປັນ 100% ແລ້ວແບ່ງເປັນພູດ.

## ມາດຕາ 10. ກົລະນີມີການແກ້ໄຂການລະເມີດຢູ່ຂັ້ນເມືອງ

ກໍລະນີມີການແກ້ໄຂການລະເມີດຢູ່ຂັ້ນເມືອງພູດ 4% ໃນການບູລະນະກິງຈັກການຈັດຕັ້ງວຽກງານກວດກາການຄ້າທີ່ໄດ້ຕັ້ງ ເປັນ 100% ນັ້ນ, 80% ແມ່ນຮັກສາໄວ້ຢູ່ອົງການຈັດຕັ້ງປະຕິບັດວຽກງານກວດກາການຄ້າ ຢູ່ຂັ້ນເມືອງ, ສ່ວນ 20% ມອບໃຫ້ອົງການຈັດຕັ້ງປະຕິບັດວຽກງານກວດກາການຄ້າ ຢູ່ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ. ຫລັງຈາກນັ້ນໃຫ້ ພະແນກອຸດສາຫະກຳ

ແລະການຄ້າແຂວງ, ນະຄອນຫຼວງ ເອົາ 20% ມາຕັ້ງເປັນ 100% ແລ້ວແບ່ງ 10% ມອບໃຫ້ອົງການຈັດຕັ້ງປະຕິບັດວຽກງານກວດກາການຄ້າຂັ້ນສູນກາງ.

### ມາດຕາ 11. ກໍລະນີມີການແກ້ໄຂຢູ່ຂັ້ນແຂວງ

ກໍລະນີມີການແກ້ໄຂຢູ່ແຂວງ, ນະຄອນຫຼວງ ພູດ 4% ໃນການບູລະນະກິງຈັກການຈັດຕັ້ງວຽກງານກວດກາການຄ້າທີ່ໄດ້ຕັ້ງ ເປັນ 100% ນັ້ນ, 95% ແມ່ນຮັກສາໄວ້ຢູ່ອົງການຈັດຕັ້ງປະຕິບັດວຽກງານກວດກາການຄ້າ ຢູ່ຂັ້ນແຂວງ, ສ່ວນ 5% ມອບໃຫ້ອົງການຈັດຕັ້ງປະຕິບັດວຽກງານກວດກາການຄ້າຂັ້ນສູນກາງ.

### ມາດຕາ 12. ກໍລະນີບໍ່ມີຜູ້ບອກຂ່າວ

ກໍລະນີບໍ່ມີຜູ້ບອກຂ່າວ, ໃຫ້ເອົາຄ່າແຫຼ່ງຂ່າວ (4%) ມາເພີ່ມໃສ່ຄ່າໃຊ້ຈ່າຍ ໃນການບູລະນະກິງຈັກວຽກງານກວດກາການຄ້າ.

### ມາດຕາ 13. ກໍລະນີຂະແໜງການອື່ນສົ່ງຄະດີມາໃຫ້ອົງການປະຕິບັດວຽກງານກວດກາການຄ້າ

ກໍລະນີຂະແໜງການອື່ນສົ່ງຄະດີມາໃຫ້ອົງການປະຕິບັດວຽກງານກວດກາການຄ້າເປັນຜູ້ດຳເນີນການ ເງິນຫັກຄ່າສິ້ນເປືອງ ທີ່ບໍ່ເກີນ 20% ແບ່ງປັນດັ່ງນີ້ :

- ຂະແໜງການທີ່ສົ່ງຄະດີມາ ໄດ້ຮັບ ບໍ່ເກີນ 18%.
- ຄ່າສິ້ນເປືອງຂອງອົງການປະຕິບັດວຽກງານກວດກາການຄ້າ ບໍ່ເກີນ 2%.

### ມາດຕາ 14. ການນຳໃຊ້ເງິນຮ່ວງບູລະນະກິງຈັກວຽກງານກວດກາການຄ້າ

ການນຳໃຊ້ເງິນຮ່ວງບູລະນະກິງຈັກການຈັດຕັ້ງວຽກງານກວດກາການຄ້າ, ພາຍຫຼັງທີ່ໄດ້ຫັກໃຫ້ອົງການປະຕິບັດວຽກງານກວດກາການຄ້າ ຂັ້ນຕ່າງໆແລ້ວ ສາມາດນຳໃຊ້ໄດ້ ດັ່ງນີ້:

1. ຄ່າສິ້ນເປືອງໃນການສະສາງຄະດີບໍ່ໃຫ້ເກີນ 10%
2. ຊອກຫາຂໍ້ມູນ ແລະແຫຼ່ງຂ່າວບໍ່ໃຫ້ເກີນ 10%
3. ນະໂຍບາຍຕາມມາດຕາ 29 ຂອງດຳລັດວ່າດ້ວຍການກວດກາການຄ້າບໍ່ໃຫ້ເກີນ 10%
4. ເງິນອຸດໜູນບໍ່ໃຫ້ເກີນ 25%
5. ພັດທະນາບຸກຄະລາກອນບໍ່ໃຫ້ເກີນ 25%
6. ເຄື່ອນໄຫວວຽກງານວິຊາສະເພາະບໍ່ໃຫ້ເກີນ 20%

### ມາດຕາ 15. ລາຍລະອຽດໃນການໃຊ້ຈ່າຍແຕ່ລະຮ່ວງ

ຄ່າສິ້ນເປືອງໃນການສະສາງຄະດີ : ແມ່ນຈ່າຍໃຫ້ເຈົ້າໜ້າທີ່ກວດກາການຄ້າ, ຊຶ່ງປະຕິບັດໜ້າທີ່ ທີ່ກ່ຽວຂ້ອງກັບການດຳເນີນ ແລະສະສາງຄະດີ ;

ຊອກຫາຂໍ້ມູນ ແລະ ແຫຼ່ງຂ່າວ: ແມ່ນໃຊ້ຈ່າຍເຂົ້າໃນການລົງກໍ່ສ້າງພື້ນຖານປົດລັບ,ໃນການຊອກຫາແຫຼ່ງຂ່າວກ່ຽວກັບການເຄື່ອນໄຫວທີ່ລະເມີດລະບຽບກົດໝາຍ ;

ນະໂຍບາຍຕາມມາດຕາ 29 ຂອງດຳລັດວ່າດ້ວຍການກວດກາການຄ້າ : ແມ່ນໃຊ້ຈ່າຍເພື່ອຊື້ວັດຖຸ, ສິ່ງຂອງ ຫຼືຈ່າຍເປັນຄ່າສິ້ນເປືອງໃນການສະເໜີຂໍນະໂຍບາຍການຍ້ອງຍໍຈາກຂັ້ນເທິງ ເພື່ອມອບໃຫ້ແກ່ຜູ້ມີຜົນງານໃນການປະກອບສ່ວນຕ້ານ ແລະ ສະກັດກັ້ນກ່ຽວກັບການລະເມີດລະບຽບກົດໝາຍຕໍ່ກັບປະເພດສິນຄ້າຕ້ອງຫ້າມ;

ເງິນອຸດໜູນ : ແມ່ນໃຊ້ຈ່າຍເຂົ້າໃນການອຸດໜູນ, ຊ່ວຍເຫຼືອ ຫຼື ຮັກສາປິ່ນປົວ ແລະ ອື່ນໆຕໍ່ພະນັກງານ ແລະ ເຈົ້າໜ້າທີ່ກວດກາການຄ້າຄື: ມີໜ້າທີ່ ຫຼື ບໍ່ມີໜ້າທີ່ທີ່ກ່ຽວກັບການຕ້ານ ແລະ ສະກັດກັ້ນການລະເມີດລະບຽບກົດໝາຍໃນກໍລະນີເກີດອຸປະຕິເຫດ ຫຼື ເຫດການທີ່ບໍ່ເພິ່ງປາດຖະໜາໃນເວລາປະຕິບັດໜ້າທີ່;

ພັດທະນາບຸກຄະລາກອນ: ແມ່ນນຳໃຊ້ເພີ່ມເຂົ້າໃນການໃຊ້ຈ່າຍກ່ຽວກັບການພັດທະນາບຸກຄະລາກອນໃຫ້ມີຄຸນນະພາບເຊັ່ນ: ການຝຶກອົບຮົມ ແລະ ການໂຄສະນາເຜີຍແຜ່ລະບຽບກົດໝາຍທີ່ກ່ຽວຂ້ອງ;

ເຄື່ອນໄຫວວຽກງານວິຊາສະເພາະ: ແມ່ນນຳໃຊ້ເພີ່ມເຂົ້າໃນການໃຊ້ຈ່າຍກ່ຽວກັບການຈັດຊື້ພາຫະນະ, ວັດຖຸອຸປະກອນ ແລະ ເຄື່ອງຮັບໃຊ້ການເຄື່ອນໄຫວວຽກງານກວດກາການຄ້າ ແລະ ການໃຊ້ຈ່າຍອື່ນໆທີ່ຈຳເປັນ, ຊຶ່ງກ່ຽວຂ້ອງກັບການພັດທະນາ ແລະ ປັບປຸງວຽກງານກວດກາການຄ້າ.

## ໝວດທີ III
## ການສະຫຼຸບລາຍຮັບ-ລາຍຈ່າຍ ແລະ ຜູ້ອະນຸມັດເບີກຈ່າຍ

### ມາດຕາ 16. ການສະຫຼຸບລາຍຮັບ-ລາຍຈ່າຍ ແລະ ການເປີດບັນຊີ

- ຕ້ອງມີການສະຫຼຸບ ລາຍຮັບ-ລາຍຈ່າຍ ແລະ ລາຍງານເປັນແຕ່ລະເດືອນ,ງວດ, ປີ ເປັນລາຍລັກອັກສອນໃຫ້ຂັ້ນເທິງຖັດຕົນ;
- ໃຫ້ເປີດບັນຊີເງິນຝາກໄວ້ ຢູ່ບ່ອນທີ່ໃກ້ ຫຼື ບ່ອນທີ່ມີເງື່ອນໄຂສະດວກ;

ທຸກການເບີກຈ່າຍ ແລະ ນຳໃຊ້ຕ້ອງໃຫ້ຖືກຕາມເປົ້າໝາຍ ຫຼື ລະບຽບການທີ່ກຳນົດໄວ້ ແລະ ຕ້ອງມີບັນຊີຕິດຕາມການໃຊ້ຈ່າຍຢ່າງລະອຽດ, ຈະແຈ້ງ,ໂປ່ງໃສ ແລະ ສາມາດກວດກາຄືນໄດ້ທຸກເວລາ.

### ມາດຕາ 17. ຜູ້ອະນຸມັດເບີກຈ່າຍ

- ສຳລັບພະແນກກວດກາການຄ້າ ແມ່ນຫົວໜ້າກົມການຄ້າພາຍໃນເປັນຜູ້ອະນຸມັດ;
- ສຳລັບໜ່ວຍງານກວດກາການຄ້າ ແມ່ນຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ເປັນຜູ້ອະນຸມັດ ;

ກ້

- ສຳລັບຈຸງານກວດກາການຄ້າເມືອງ ແມ່ນຫົວໜ້າຫ້ອງການອຸດສາຫະກຳ ແລະ ການຄ້າເມືອງເປັນຜູ້ອະນຸມັດ.

## ໝວດທີ IV
## ບົດບັນຍັດສຸດທ້າຍ

**ມາດຕາ 18. ການຈັດຕັ້ງປະຕິບັດ.**

ມອບໃຫ້ອົງການປະຕິບັດງານກວດກາການຄ້າ ເປັນເຈົ້າການໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ ແລະປະກົດຜົນເປັນຈິງ.

**ມາດຕາ 19. ຜົນສັກສິດ.**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ, ຂໍ້ກຳນົດ, ບົດບັນຍັດໃດທີ່ອອກໃນເມື່ອກ່ອນ,ຊຶ່ງຂັດກັບຂໍ້ຕົກລົງສະບັບນີ້ລ້ວນແຕ່ຖືກຍົກເລີກ.

ລັດຖະມົນຕີວ່າການ
ກະຊວງອຸດສາຫະກຳ ແລະ ການຄ້າ

ສຽວສະຫວາດ ສະແຫວງສຶກສາ